**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງຊຽງເງິນ

ຫ້ອງການກະສິກຳ ແລະ ປ່າໄມ້

ໂຄງການ ຊກຂ

ເລກທີ:253../ຫກປມ-ຊກຂ

ເມືອງຊຽງເງິນ,ວັນທີ:21./..3/.2023

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກຳໃນຂອບເຂດເມືອງຊຽງເງິນ ແຂວງຫຼວງພະບາງ.

**ເລື່ອງ:** ການສະໝັກຍື່ນຄຳຮ້ອງເພື່ອຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງຊຽງເງິນ ແຂວງຫຼວງພະບາງ.

- ອີງໃສ່: ສັນຍາເງິນກູ້ຢືມຈາກກອງທຶນ ສາກົນ ເພື່ອການພັດທະນາກະສິກຳ **IFAD** ເລກທີ: 2000003089.
- ອີງໃສ່: ເລກທີ 034 ກະຊວງການເງິນວ່າດ້ວຍການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.
- ອີງໃສ: ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ປະຈຳປີ 2023.

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງຊຽງເງິນ ແຂວງຫຼວງພະບາງ ເປັນໂຄງການສົ່ງເສີມການຜະລິດກະສິກຳຂອງຄົວເຮືອນຂະໜາດນ້ອຍເພື່ອເປັນສິນຄ້າໂດຍມີການເຊື່ອມໂຍງກັບຕະຫຼາດ. ໂຄງການດັ່ງກ່າວມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ໂດຍເລີ່ມຈາກການຜະລິດເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໄປສູ່ການຜະລິດເປັນສິນຄ້າ. ກອງທຶນສົມທົບ ສຳລັບພັດທະນາທຸລະກິດກະສິກຳແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າຂອງກິດຈະກຳທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດໂດຍຜ່ານການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນໃຫ້ແກ່ຫົວໜ່ວຍທຸລະກິດກະສິກຳທີ່ຕິດພັນກັບກຸ່ມກະສິກອນ ແລະ ຊຸມຊົນເປົ້າໝາຍຂອງໂຄງການ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ, ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງບໍລິການຂອງພາກທຸລະກິດ.

ເພື່ອເປັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຊຽງເງິນ ໃນນາມເປັນຈຸດໃຈກາງໃນການປະສານງານຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ຂໍຖືເປັນກຽດແຈ້ງມາຍັງບັນດາ

ຫົວໜ່ວຍທຸລະກິດກະສິກໍາທີ່ມີການສົ່ງເສີມການຜະລິດເປັນສິນຄ້າຊາບວ່າ ປັດຈຸບັນທາງໂຄງການໄດ້ມີການສະໜອງທຶນສົມທົບເພື່ອພັດທະນາທຸລະກິດກະສິກໍາ.

- **ສໍາລັບຂັ້ນເມືອງປ່ອຍທຶນສົມທົບຫົວໜ່ວຍທຸລະກິດກສິກກໍາຂະໜາດກາງເມືອງລະ 02-03 ຫົວໜ່ວຍຕໍ່ເມືອງ.**

**ເງື່ອນໄຂຫົວໜ່ວຍທຸລະກິດກະສິກໍາມີດັ່ງນີ້:**

- ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD .
- ຫົວໜ່ວຍທຸລະກິດ ມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍ.
- ຫົວໜ່ວຍທຸລະກິດ ມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
- ຫົວໜ່ວຍທຸລະກິດ ມີການດໍາເນີນກິດຈະການຫຼາຍກວ່າ 02 ປີຂຶ້ນໄປ.
- ຫົວໜ່ວຍທຸລະກິດ ມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກໍາ ແລະ ການເຊື່ອມໂຍງກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ຜົນຜະລິດກັບກຸ່ມຜະລິດທີ່ໂຄງການໄດ້ໃຫ້ການສະໜັບສະໜູນສ້າງຕັ້ງຂຶ້ນ).

ໄລຍະເວລາການປະກາດ 14 ວັນ, ເລີ່ມແຕ່ວັນທີ 21ມີນາ2023 ເຖິງ ວັນທີ 3ເມສາ2023.

ສະນັ້ນ, ຫ້ອງການກະສິກໍາ ແລະ ປ່າໄມ້ ຈຶ່ງອອກແຈ້ງການສະບັບນີ້ເຖິງບັນດາຫົວໜ່ວຍທຸລະກິດກະສິກໍາ, ບໍລິສັດສົ່ງເສີມການຜະລິດກະສິກໍາເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກໍາ ຜູ້ທີ່ມີຄວາມສົນໃຈເພື່ອສະໝັກຂໍທຶນສົມທົບນໍາໂຄງຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFA ສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ເມືອງຊຽງເງິນ. ໃນວັນ ແລະ ເວລາລັດຖະການ.

**ຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງຊຽງເງິນ**

**ຜູ້ປະສານງານໂຄງການ ຊກຂ**

ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງຊຽງເງິນ

ພູວຽງ ຈິດຕະວົງຖໍ່

Phouvieng CHITTAVONG THAO

ຜູ້ປະສານງານໂຄງການ ຊກຂ ເມືອງຊຽງເງິນ
ເບີໂທຕິດຕໍ່: 020 28666632